ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# 2 ທະນາຄານກາງ ລາວ ແລະ ຫວຽດນາມ ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມື ແລະ ການແລກປ່ຽນຂໍ້ມູນຂ່າວສານການກວດກາ ແລະ ການຄຸ້ມຄອງທະນາຄານທຸລະກິດ

ໃນໄລຍະການຢ້ຽມຢາມຢ່າງເປັນທາງການທີ່ ສສ. ຫວຽດນາມ ຂອງພະນະທ່ານ ພັນຄໍາ ວິພາວັນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ແລະ ຄະນະ ໃນລະຫວ່າງວັນທີ 08-10 ມັງກອນ 2022, ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າ ການ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທ່ານ ນ. ຫງວຽນ ທິ ຮົ່ງ, ຜູ້ວ່າການ ທະນາຄານແຫ່ງລັດ ຫວຽດ ນາມ (ທຫວ) ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ (MoU) ວ່າດ້ວຍການຮ່ວມມື ແລະ ການແລກປ່ຽນຂໍ້ມູນ ຂ່າວສານການກວດກາ ແລະ ການຄຸ້ມຄອງທະນາຄານທຸລະກິດ ໂດຍການເຂົ້າຮ່ວມເປັນສັກຂີພິຍານຂອງ ທ່ານນາ ຍົກລັດຖະມົນຕີສອງປະເທດ ໃນຕອນເຊົ້າຂອງວັນທີ 08 ມັງກອນ 2022.




ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ ແລະ ທ່ານ ນ. ຫງວຽນ ທິ ຮົ່ງ, ຜູ້ວ່າການ ທຫວ

MoU ວ່າດ້ວຍການຮ່ວມມື ແລະ ການແລກປ່ຽນຂໍ້ມູນຂ່າວສານການກວດກາ ແລະ ການຄຸ້ມຄອງທະນາຄານທຸລະກິດ ແມ່ນການຍົກລະດັບຈາກຂໍ້ຕົກລົງການແລກປ່ຽນຂໍ້ມູນການຄຸ້ມຄອງທະນາຄານ ທີ່ໄດ້ລົງນາມໃນປີ 2008 ຜ່ານມາ ເພື່ອສະທ້ອນໃຫ້ເຫັນເຖິງສະພາບການລົງທຶນໃນຂະແໜງການທະນາຄານປັດຈຸບັນ. ໃນ MoU ດັ່ງກ່າວໄດ້ກຳນົດການຮ່ວມມືລະຫວ່າງສອງທະນາຄານກາງ ໂດຍລົງເລິກໃນວຽກງານແລກປ່ຽນຂໍ້ມູນຂ່າວສານ, ການຄຸ້ມຄອງທະນາຄານທຸລະກິດຂ້າມແດນລະຫວ່າງກັນ, ການກວດກາ ແລະ ການບໍລິຫານວິກິດການບົນພື້ນຖານຄວາມເຊື່ອໝັ້ນ ແລະ ຄວາມເຂົ້າໃຈຊຶ່ງກັນ ແລະ ກັນໃນການຄຸ້ມຄອງທະນາຄານທຸລະກິດທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຄຸ້ມຄອງຂອງແຕ່ລະຝ່າຍ. ສິ່ງດັ່ງກ່າວສະແດງເຖິງເຈດຕະນາລົມໃນການຍົກສູງຄຸນນະພາບ ແລະ ລົງເລິກການຮ່ວມມືດ້ານວຽກງານກວດກາທະນາຄານທຸລະກິດ, ຍົກລະດັບຄວາມອາດສາມາດຂອງພະນັກງານກວດກາ ແລະ ການວິເຄາະຄວາມສ່ຽງການດຳເນີນທຸລະກິດຂອງທະນາຄານທຸລະກິດຂອງສອງປະເທດທີ່ສ້າງຕັ້ງຂ້າມແດນ ຊຶ່ງສອດຄ່ອງກັບຍຸດທະສາດ ແລະ ຮ່ວມມືກັນໃນການຈັດຕັ້ງຜັນຂະຫຍາຍກອບການຮ່ວມມື ແລະ ແຜນການເຊື່ອມໂຍງຂະແໜງທະນາຄານອາຊຽນຂອງສອງທະນາຄານກາງ.




ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ ແລະ ທ່ານ ນ. ຫງວຽນ ທິ ຮົ່ງ, ຜູ້ວ່າການ ທຫວ

ພ້ອມດຽວກັນນີ້, ການລົງນາມ MoU ໃນຄັ້ງນີ້ ຍັງສະແດງໃຫ້ເຫັນເຖິງຄວາມໝາຍຄວາມສຳຄັນຂອງການຮ່ວມມື ມິດຕະພາບພິເສດເພື່ອນມິດຍຸດທະສາດ ລະຫວ່າງສອງທະນາຄານກາງ ກໍ່ຄື ສອງປະເທດ ລາວ-ຫວຽດນາມ ບົນພື້ນຖານຄວາມເຊື່ອໝັ້ນ ແລະ ສະໜັບສະໜູນຊຶ່ງກັນ ແລະ ກັນ ແລະ ຄຳໝັ້ນສັນຍາຮ່ວມກັນໃນການຈັດຕັ້ງຜັນຂະຫຍາຍສັນຍາການຮ່ວມມືຕ່າງໆທີ່ທັງສອງປະເທດ ກໍຄືສອງທະນາຄານກາງທີ່ໄດ້ລົງນາມຮ່ວມກັນຜ່ານມາ.

**#ຂ່າວ ແລະ ພາບໂດຍ: ກົມຮ່ວມມືສາກົນ**